**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 4756---- /ກປ

ນະຄອນຫຼວງວຽງຈັນ, ວັນທີ 18 NOV 2022

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍສັດນໍ້າ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ດຳລັດ ວ່າດ້ວຍປ່າສະຫງວນ ສະບັບເລກທີ 134/ລບ, ລົງວັນທີ 13 ພຶດສະພາ 2015;
- ອີງຕາມ ດຳລັດ ວ່າດ້ວຍການສ້າງຕັ້ງອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ສະບັບເລກທີ 35/ນຍ, ລົງວັນທີ 15 ກຸມພາ 2019;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1886/ກຈພ, ລົງວັນທີ 05 ກັນຍາ 2022.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ແນໃສ່ຈັດຕັ້ງ ແລະ ຜັນຂະຫຍາຍ ແນວທາງນະໂຍບາຍ ຂອງພັກ, ປະຕິບັດ ກົດໝາຍ ແລະ ລະບຽບການຂອງລັດ ໃນການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ, ນຳໃຊ້ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຢູ່ໃນເຂດອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ, ປະກອບສ່ວນເຂົ້າໃນການພັດທະນາຊົນນະບົດ, ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກ ໃຫ້ປະຊາຊົນບັນດາເຜົ່າ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ຂຽນເປັນຕົວອັກສອນຫຍໍ້ວ່າ **"ກອຊ.ນອ-ພລ"** ແມ່ນກົງຈັກໜຶ່ງ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້ ໂດຍແມ່ນກົມປ່າໄມ້ ຊີ້ນຳທາງດ້ານວິຊາການ, ຊຶ່ງມີທີ່ຕັ້ງຢູ່ຂັ້ນທ້ອງຖິ່ນ ກວມເອົາແຂວງຫົວພັນ, ແຂວງຊຽງຂວາງ ແລະ ແຂວງຫຼວງພະບາງ, ມີພາລະບົດບາດໃນການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃນເຂດອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ໃຫ້ມີຄວາມຍືນຍົງ.

# ໝວດທີ 2
# ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ມີໜ້າທີ່ ດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິ ຂອງສະພາແຫ່ງຊາດ, ລັດຖະບັນຍັດ, ດຳລັດ, ມະຕິ ຂອງລັດຖະບານ, ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳອື່ນ ຂອງຂັ້ນເທິງວາງອອກ;
2. ຄົ້ນຄວ້າ, ຜັນຂະຫຍາຍ ແນວທາງນະໂຍບາຍຂອງພັກ, ແຜນຍຸດທະສາດ ຂອງຂະແໜງການກະສິກຳ ແລະ ປ່າໄມ້ ມາເປັນແຜນງານ ແລະ ໂຄງການ ສະເພາະຂອງຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
3. ເຜີຍແຜ່, ເຊື່ອມຊຶມ ນະໂຍບາຍ, ລະບຽບ, ກົດໝາຍ ກ່ຽວກັບວຽກງານຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະກອນປ່າໄມ້ ຢູ່ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ພ້ອມທັງຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານ ຂອງພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
4. ຄົ້ນຄວ້າ, ນຳສະເໜີ ແລະ ປັບປຸງກົງຈັກການຈັດຕັ້ງ ພ້ອມທັງກຳນົດຕຳແໜ່ງງານໃຫ້ຄົບຖ້ວນ, ສ້າງແຜນກຳນົດພະນັກງານ ນຳພາ-ຄຸ້ມຄອງ ແລະ ແຜນບຳລຸງກໍ່ສ້າງພະນັກງານ-ລັດຖະກອນ ຂອງຕົນ ແຕ່ລະໄລຍະ ບົນພື້ນຖານຄວາມສະເໝີພາບບົດບາດຍິງ-ຊາຍ ໂດຍປະຕິບັດນະໂຍບາຍ, ປະເມີນຜົນພະນັກງານ-ລັດຖະກອນໃຫ້ເໝາະສົມ, ຍ້ອງຍໍຜູ້ທີ່ມີຜົນງານດີເດັ່ນ ແລະ ປະຕິບັດວິໄນຕໍ່ຜູ້ກະທຳຜິດກົດໝາຍ, ລະບຽບການ ທີ່ໄດ້ກຳນົດໄວ້ ແລະ ປັບປຸງແບບແຜນວິທີເຮັດວຽກ, ກົນໄກການຄຸ້ມຄອງບໍລິຫານຂອງຕົນ ໃຫ້ມີປະສິດທິພາບ ພ້ອມທັງບັນຈຸ-ສັບຊ້ອນ ບຸກຄະລາກອນ ຂອງຕົນ ຕາມຄວາມເໝາະສົມ;
5. ຄຸ້ມຄອງ ສະຖິຕິ ແລະ ຊີວະປະຫວັດ ຂອງພະນັກງານ-ລັດຖະກອນ ທີ່ຂຶ້ນກັບກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ເພື່ອເປັນຖານຂໍ້ມູນດ້ານບຸກຄະລາກອນ ຕອບສະໜອງໃຫ້ແກ່ການວາງແຜນ ຄຸ້ມຄອງ, ກໍ່ສ້າງ ພະນັກງານ ໃຫ້ສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້;
6. ຄົ້ນຄວ້າ ແລະ ຈັດຕັ້ງຜັນຂະຫຍາຍ ບັນດາກົດໝາຍ, ລະບຽບການ ທີ່ກ່ຽວຂ້ອງ ແລະ ຄູ່ມືທາງດ້ານເຕັກນິກວິຊາການ ທັງພາຍໃນ ແລະ ສາກົນ ທີ່ຕິດພັນກັບການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ; ພັດທະນາ ແລະ ນຳໃຊ້ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ໄດ້ຮັບຜົນດີ;
7. ຈັດຕັ້ງປະຕິບັດວຽກງານ ຕາມແຜນຄຸ້ມຄອງ-ຈັດສັນ ອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ໂດຍປະສານງານກັບຂະແໜງການທີ່ກ່ຽວຂ້ອງ 10 ເມືອງ 3 ແຂວງ ຄື: ເມືອງແອດ, ເມືອງຮ້ຽມ, ເມືອງຫົວເມືອງ, ເມືອງຊຳເໜືອ, ເມືອງຊ່ອນ ແຂວງຫົວພັນ; ເມືອງປາກແຊງ, ເມືອງໂພນທອງ, ເມືອງໂພນໄຊ, ເມືອງວຽງຄຳ ແຂວງຫຼວງພະບາງ ແລະ ເມືອງ ພູກູດ, ແຂວງ ຊຽງຂວາງ;
8. ປະສານສົມທົບກັບຂະແໜງການສາຍຕັ້ງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ, ເກັບກຳຂໍ້ມູນ, ກຳນົດ ແລະ ປັກຫຼັກໝາຍ ຂອບເຂດ, ວາງແຜນນຳໃຊ້ທີ່ດິນ ແລະ ປ່າໄມ້ ແບ່ງໃສ່ຈັດສັນ ແລະ ຄຸ້ມຄອງ ໃນແຕ່ລະໄລຍະໃຫ້ລະອຽດ ເຊັ່ນ: ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນຳໃຊ້, ເຂດກັນຊົນ, ເຂດໂຄງການທີ່ໄດ້ຮັບການອະນຸມັດຈາກລັດຖະບານ;
9. ຄົ້ນຄວ້າ ແລະ ກຳນົດ ຮູບແບບການພັດທະນາຊີວິດການເປັນຢູ່ ຄຽງຄູ່ກັບການອະນຸລັກແບບຍືນຍົງ ໃຫ້ແກ່ບ້ານ ທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ເພື່ອສ້າງເປັນບ້ານພັດທະນາ, ຄຸ້ມຄອງ, ອະນຸລັກ ແລະ ປົກປັກຮັກສາ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕິດພັນກັບການພັດທະນາກະສິກຳ ໃນຂອບເຂດທີ່ໄດ້ກຳນົດ ແລະ ຈັດສັນໄວ້ ຕາມແຜນຈັດສັນ;
10. ເກັບກຳ, ສັງລວມ, ສ້າງ ແລະ ຄຸ້ມຄອງຂໍ້ມູນ-ຂ່າວສານ ດ້ານ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ຖິ່ນທີ່ຢູ່ອາໄສສຳຄັນ ຂອງຊະນິດພັນພືດ ແລະ ພັນສັດປ່າ ທີ່ຫາຍາກ ແລະ ໃກ້ຈະສູນພັນ ເພື່ອເປັນ

໒.໙໖

ຖານຂໍ້ມູນ, ສູນຮຽນຮູ້ ໃຫ້ແກ່ການສຶກສາຄົ້ນຄວ້າ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ ໃຫ້ມີຄວາມຍືນຍົງ;

11. ປຸກລະດົມ, ຂົນຂວາຍ, ໂຄສະນາ ເຜີຍແຜ່ ກົດໝາຍ, ລະບຽບການ ເພື່ອປູກຈິດສໍານຶກ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນ ພ້ອມທັງຊຸກຍູ້ ອົງການປົກຄອງບ້ານ ໃນການສ້າງຕັ້ງ ຈຸງານກະສິກໍາ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ ແລະ ອອກລະບຽບການຄຸ້ມຄອງ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້;

12. ຄົ້ນຄວ້າ ແລະ ປະກອບຄໍາເຫັນ ກ່ຽວກັບ ການສະເໜີຂໍດໍາເນີນກິດຈະການສຶກສາຄົ້ນຄວ້າ ຊັບພະຍາກອນປ່າໄມ້, ພັນພືດ, ພັນສັດນໍ້າ ແລະ ສັດປ່າ, ການທ່ອງທ່ຽວ ທາງທໍາມະຊາດ, ປະຫວັດສາດ ແລະ ວັດທະນະທໍາ ເພື່ອການອະນຸລັກສິ່ງແວດລ້ອມ ແລະ ສ້າງລາຍຮັບ ໃຫ້ທ້ອງຖິ່ນ, ເຂດເປົ້າໝາຍ ການພັດທະນາຂອງລັດຖະບານ;

13. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ ກວດກາ ບັນດາກິດຈະການ ແລະ ໂຄງການ ເປັນຕົ້ນ: ການທ່ອງທ່ຽວ, ການຂຸດຄົ້ນແຮ່ທາດ, ຂຸດຄົ້ນ ແລະ ເຄື່ອນຍ້າຍຊັບພະຍາກອນປ່າໄມ້ ຈາກເຂດບຸກເບີກເນື້ອທີ່ການກໍ່ສ້າງໂຄງລ່າງພື້ນຖານ ໃນເຂດອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ທີ່ໄດ້ຮັບອະນຸມັດ ຈາກລັດຖະບານ;

14. ຊຸກຍູ້ ແລະ ສົ່ງເສີມ ວຽກງານ ກ້າເບ້ຍ, ປູກໄມ້, ຟື້ນຟູປ່າ ແບບທໍາມະຊາດ, ພືດເປັນຢາ ແລະ ເຄື່ອງປ່າຂອງດົງ ຕາມແຜນຈັດສັນ, ຄຸ້ມຄອງ ໃຫ້ມີຄວາມຍືນຍົງ;

15. ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງໃນການ ຕ້ານ ແລະ ສະກັດກັ້ນ ໄຟໄໝ້ລາມປ່າ ໃນເຂດອຸທິຍານແຫ່ງຊາດນໍ້າແອດ-ພູເລີຍ;

16. ສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ສຶກສາ ທ່າແຮງ ແລະ ຄວາມຕ້ອງການ ຂອງບ້ານ ກ່ຽວກັບການນໍາໃຊ້ໄມ້, ໄມ້ພະລັງງານ ແລະ ເຄື່ອງປ່າຂອງດົງ ເພື່ອສາທາລະນະປະໂຫຍດ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແນໃສ່ສ້າງແຫຼ່ງລາຍໄດ້ເພີ່ມທີ່ຕິດພັນກັບການຈັດສັນອາຊີບຄົງທີ່ໃຫ້ຄອບຄົວ ພ້ອມທັງຊຸກຍູ້, ຕິດຕາມ, ກວດກາ ການປະຕິບັດແຜນການນໍາໃຊ້ ແລະ ລະບຽບການ ທີ່ໄດ້ກໍານົດ ໃຫ້ແຕ່ລະບ້ານ;

17. ຈັດຕັ້ງປະຕິບັດວຽກງານຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທໍາລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ (REDD+) ແລະ ການຈ່າຍຄ່າບໍລິການສິ່ງແວດລ້ອມ ໃນເຂດອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ໃຫ້ມີປະສິດທິຜົນ;

18. ເປັນເຈົ້າການກໍານົດຈຸດ ປ້ອມຍາມ ເຂົ້າ-ອອກ, ປ້ອມຍາມປ່າ ພ້ອມທັງດໍາເນີນການ ກວດກາ ລາດຕະເວນຕາມຈຸດຫຼໍ່ແຫຼມ ຢ່າງເປັນປົກກະຕິ-ຕໍ່ເນື່ອງ ກໍລະນີພົບເຫັນການລະເມີດກົດໝາຍ ແລະ ລະບຽບການ ເຊິ່ງໜ້າ ຕ້ອງໄດ້ ສັ່ງຢຸດຕິ, ກັກ, ຍຶດ, ເກັບກໍາຂໍ້ມູນ ແລະ ຫຼັກຖານ ເພື່ອສັງລວມລາຍງານ ຕໍ່ເຈົ້າໜ້າທີ່ກ່ຽວຂ້ອງ ພ້ອມທັງເຂົ້າຮ່ວມ ແລະ ຕິດຕາມ ການດໍາເນີນຂະບວນການຍຸຕິທໍາ;

19. ຍາດແຍ່ງເອົາ ການຮ່ວມມື ແລະ ການຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິທະຍາສາດ-ວິຊາການ ຈາກພາຍໃນ ແລະ ຕ່າງປະເທດ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດບັນດາ ແຜນງານ, ແຜນການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ມີປະສິດທິພາບ;

20. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໂຄງການ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນ ການປະຕິບັດວຽກງານ ຂອງຊ່ຽວຊານ ພາຍໃນ ແລະ ຕ່າງປະເທດ ລວມທັງອໍານວຍຄວາມສະດວກໃນການເຄື່ອນໄຫວປະຕິບັດໜ້າທີ່ໃນຂອບເຂດຄວາມຮັບຜິດຊອບ ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ;

21. ຂຶ້ນແຜນ, ສະຫຼຸບ ງົບປະມານ, ຄຸ້ມຄອງລະບົບ ບັນຊີ-ການເງິນ, ຊັບສິນຂອງລັດ ແລະ ບັນດາໂຄງການທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ເປັນລະບົບ ແລະ ມີຄວາມໂປ່ງໃສ ສາມາດກວດສອບໄດ້;

22. ຊຸກຍູ້, ຕິດຕາມ, ກວດກາ, ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານຂອງຕົນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະ ດ.ອພ

ຍາກອນປ່າໄມ້ ພ້ອມທັງສະຫຼຸບສັງລວມ ແລະ ລາຍງານ ປະຈຳອາທິດ, 1 ເດືອນ, 3 ເດືອນ, 6 ເດືອນ, 1 ປີ ເຄິ່ງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;

23. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ຫົວໜ້າ ກົມປ່າໄມ້ ແລະ ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງທີ່ກ່ຽວຂ້ອງ.

**ມາດຕາ 4 ຂອບເຂດສິດ**

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ມີສິດ ດັ່ງນີ້:

1. ສະເໜີຕໍ່ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ແຂວງຫົວພັນ, ຫຼວງພະບາງ ແລະ ແຂວງຊຽງຂວາງ ກ່ຽວກັບການປັບປຸງກົງຈັກການຈັດຕັ້ງ, ການກຳນົດຕຳແໜ່ງງານ, ບັນຈຸ-ສັບຊ້ອນ ແລະ ຈັດວາງບຸກຄະລາກອນ ຕາມການແບ່ງຂັ້ນຄຸ້ມຄອງ ທີ່ກົດໝາຍ ແລະ ລະບຽບການກຳນົດ ຕາມທິດກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິຜົນ;
2. ສະເໜີປະຕິບັດນະໂຍບາຍ ເລື່ອນຊັ້ນ-ຂັ້ນເງິນເດືອນ, ຍ້ອງຍໍ ແລະ ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;
3. ພົວພັນ ແລະ ປະສານສົມທົບກັບ ກົມປ່າໄມ້, ພະແນກການຕ່າງໆ ພາຍໃນແຂວງ, ຂະແໜງການ ທີ່ຂຶ້ນກັບພະແນກ, ຫ້ອງການທີ່ກ່ຽວຂ້ອງພາຍໃນເມືອງ, ກຸ່ມບ້ານ ແລະ ບ້ານ, ກອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນທ້ອງຖິ່ນ ແລະ ພື້ນທີ່ ຕາມການມອບໝາຍ;
4. ປະສານສົມທົບ ແລະ ແລກປ່ຽນຂໍ້ມູນ-ຂ່າວສານ ເຊັ່ນ: ບົດບັນທຶກການຮ່ວມມືກັບ ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ພ້ອມທັງຈັດຕັ້ງ ແລະ ເຂົ້າຮ່ວມສຳມະນາ, ຝຶກອົບຮົມ, ທັດສະນະສຶກສາ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ ຂອງຂັ້ນເທິງ;
5. ຊຸກຍູ້ ພະນັກງານຫຼັກແຫຼ່ງ ແລະ ວິຊາການ ໃນຄວາມຮັບຜິດຊອບຂອງຕົນ ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານວຽກ ເປັນແຕ່ລະໄລຍະ, ເຂົ້າຮ່ວມການວາງສະແດງ ຕາມຄວາມຮຽກຮ້ອງຕ້ອງການ ຂອງວຽກງານ ແລະ ຍົກລະດັບຄວາມຮູ້ຄວາມສາມາດ ຂອງພະນັກງານ-ລັດຖະກອນ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ທັງພາຍໃນ ແລະ ຕ່າງປະເທດ;
6. ອອກແຈ້ງການ, ແຈ້ງເຊີນ ແລະ ຄຳແນະນຳ ໃຫ້ບັນດາຂະແໜງການ, ຫົວໜ່ວຍທຸລະກິດກະສິກຳ ແລະ ປ່າໄມ້, ບັນດາບ້ານ ທີ່ຢູ່ໃນ ແລະ ອ້ອມຂ້າງເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ພ້ອມທັງຈັດຕັ້ງປະຕິບັດການເຜີຍແຜ່ ລະບຽບ, ກົດໝາຍ, ສຳມະນາ, ຝຶກອົບຮົມ ຕາມວຽກວິຊາການ ແລະ ການມອບໝາຍຂອງຂັ້ນເທິງ;
7. ສະເໜີຂໍອະນຸມັດ ສືບຕໍ່ ຫຼື ຍົກເລີກ ໂຮງງານ, ກິດຈະການ ກ່ຽວກັບ ປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ-ສັດປ່າ ແລະ ການທ່ອງທ່ຽວທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ຂອງນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນກະທົບບໍ່ດີຕໍ່ເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ຕາມກົດໝາຍ ແລະ ລະບຽບການກຳນົດ;
8. ສັ່ງຢຸດຕິ ການບຸກລຸກທຳລາຍ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້; ກັກ, ຍຶດ ຂອງກາງ ໃນເບື້ອງຕົ້ນ; ເຂົ້າຮ່ວມການສືບສວນ-ສອບສວນ ເພື່ອປະກອບສຳນວນຄະດີ ສົ່ງໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງສືບຕໍ່ດຳເນີນຄະດີຕາມຂະບວນການ ຂອງກົດໝາຍ;
9. ຄອບຄອງ, ຄຸ້ມຄອງ ແລະ ນຳໃຊ້ ອາວຸດ ເຂົ້າໃນການປະຕິບັດໜ້າທີ່ ແລະ ການເຄື່ອນໄຫວວຽກງານວິຊາການ ເຊັ່ນ: ການກວດກາ, ລາດຕະເວນ, ການສຳຫຼວດຊັບພະຍາກອນປ່າໄມ້ ແລະ ໃນເວລາປະຈຳການ ຢູ່ພາກສະໜາມ, ປ້ອມຍາມ ເຂົ້າ-ອອກ ແລະ ປ້ອມຍາມປ່າ ຕາມການອະນຸມັດຂອງຂັ້ນເທິງ;
10. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳອື່ນ ແລະ ຕາມການມອບໝາຍ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ຫົວໜ້າ ກົມປ່າໄມ້ ແລະ ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງທີ່ກ່ຽວຂ້ອງ. ດ.ອພ

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ມີໂຄງປະກອບກົງຈັກ ດັ່ງນີ້:

1. ໜ່ວຍງານບໍລິຫານ ແລະ ແຜນການ;
2. ໜ່ວຍງານວິຊາການ.

**ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ**

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກອງ ຈຳນວນ 01 ທ່ານ ຮັບຜິດຊອບຕໍ່ ລັດຖະມົນຕີ, ຮອງລັດຖະມົນຕີ, ຫົວໜ້າກົມປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງຫົວພັນ, ແຂວງຫຼວງພະບາງ ແລະ ແຂວງຊຽງຂວາງ ຜູ້ຊີ້ນຳ ຊີ້ເຂດວຽກງານ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດວຽກງານຂອງຕົນ.

   ໃນເວລາຫົວໜ້າກອງ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກອງ ທ່ານໃດທ່ານໜຶ່ງ ຮັກສາການແທນ.

2. ຮອງຫົວໜ້າກອງ ຈຳນວນໜຶ່ງ ຊ່ວຍຫົວໜ້າກອງ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ຫົວໜ້າກອງ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານທີ່ຕົນຊີ້ນຳ.

   ຮອງຫົວໜ້າກອງ ທີ່ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າກອງ ຊາບພາຍຫຼັງກັບມາປະຈຳການ.

3. ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ພະນັກງານ-ລັດຖະກອນ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

   ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມ ກົດໝາຍ ແລະ ລະບຽບການກຳນົດໄວ້.

## ໝວດທີ 4
## ໜ້າທີ່ ຂອງບັນດາ ໜ່ວຍງານ

**ມາດຕາ 7 ໜ້າທີ່ ຂອງໜ່ວຍງານບໍລິຫານ ແລະ ແຜນການ**

ໜ່ວຍງານບໍລິຫານ ແລະ ແຜນການ ມີໜ້າທີ່ ດັ່ງນີ້:

1. ປະສານງານດ້ານວິຊາການກັບ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ໃນການສ້າງແຜນ ຄຸ້ມຄອງ ແລະ ຈັດສັນ ເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ໄລຍະ 3-5 ປີ ແລະ ປັບປຸງແຜນຕ່າງໆ ຕາມເງື່ອນໄຂຕົວຈິງ ໂດຍຜ່ານການປະເມີນຜົນໃນແຕ່ລະໄລຍະ;
2. ຄົ້ນຄວ້າ, ນຳສະເໜີ ພາລະບົດບາດ, ປັບປຸງກົງຈັກການຈັດຕັ້ງ ພ້ອມທັງກຳນົດຕຳແໜ່ງງານໃຫ້ຄົບຖ້ວນ, ສ້າງແຜນກຳນົດພະນັກງານ ນຳພາ-ຄຸ້ມຄອງ ແລະ ແຜນບຳລຸງກໍ່ສ້າງພະນັກງານ-ລັດຖະກອນ ຂອງຕົນ ແຕ່ລະໄລຍະ ບົນພື້ນຖານຄວາມສະເໝີພາບບົດບາດຍິງ-ຊາຍ;
3. ຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນ ພະນັກງານ-ລັດຖະກອນ ຂອງຕົນ ພ້ອມທັງຄົ້ນຄວ້າ ແລະ ນຳສະເໜີການປະຕິບັດນະໂຍບາຍ ເລື່ອນຊັ້ນ-ຂັ້ນເງິນເດືອນ, ເລື່ອນຕຳແໜ່ງ, ຍ້ອງຍໍ ຕໍ່ຜູ້ທີ່ມີຜົນງານ ແລະ ປະຕິບັດວິໄນ ຕໍ່ຜູ້ກະທຳຜິດ ຕາມກົດໝາຍ ແລະ ລະບຽບການ ທີ່ວາງອອກ;
4. ຄຸ້ມຄອງ ສະຖິຕິ ແລະ ຊີວະປະຫວັດ ຂອງພະນັກງານ-ລັດຖະກອນ, ຊ່ຽວຊານ ແລະ ທີ່ປຶກສາດ້ານຕ່າງໆ ທີ່ຂຶ້ນກັບ ກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ເພື່ອສ້າງເປັນຖານຂໍ້ມູນບຸກຄະລາກອນ ແບ

ຂ.ໜ

ໃສ່ ຕອບສະໜອງໃຫ້ແກ່ການວາງແຜນການຄຸ້ມຄອງ-ນຳໃຊ້ ພະນັກງານ-ລັດຖະກອນ ໃຫ້ສອດຄ່ອງກັບ ພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້;

5. ປະສານສົມທົບກັບ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ແລະ ຂະແໜງການກ່ຽວຂ້ອງ ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານຂອງຊຸ່ຽວຊານ ທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງອຳນວຍຄວາມສະດວກ ໃນການເຄື່ອນໄຫວວຽກງານຕ່າງໆ ໃຫ້ແຕ່ລະພາກສ່ວນທີ່ມາພົວພັນ ວຽກງານກັບກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
6. ຂຽນບົດສະເໜີໂຄງການ ກ່ຽວກັບການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ເພື່ອສະເໜີຂໍງົບປະມານ ຈາກການລົງທຶນຂອງລັດ, ກອງທຶນພັດທະນາປ່າໄມ້ ລວມທັງສະເໜີຂໍການສະໜັບສະໜູນຈາກຜູ້ໃຫ້ທຶນ ທັງພາຍໃນ ແລະ ຕ່າງປະເທດ;
7. ຄົ້ນຄວ້າ, ມີຄຳເຫັນ ຕໍ່ກັບການສະເໜີ ຂໍອະນຸມັດດຳເນີນໂຄງການລົງທຶນ ແລະ ກິດຈະການຕ່າງໆ ເພື່ອ ສະເໜີຂັ້ນເທິງພິຈາລະນາ;
8. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການດຳເນີນກິດຈະການ ບັນດາຫົວໜ່ວຍທຸລະກິດ, ຜູ້ ປະກອບການ ທີ່ໄດ້ຮັບອະນຸຍາດດຳເນີນກິດຈະການ ຢູ່ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
9. ຄຸ້ມຄອງ, ວາງແຜນ ແລະ ນຳໃຊ້ ງົບປະມານ ແລະ ຊັບສິນຂອງລັດ ພາຍໃນກອງຄຸ້ມຄອງອຸທິຍານແຫ່ງ ຊາດ ນ້ຳແອດ-ພູເລີຍ ຕາມລະບຽບການ ທີ່ຂັ້ນເທິງກຳນົດໄວ້;
10. ຈັດກອງປະຊຸມຮ່ວມກັບຂະແໜງການທີ່ກ່ຽວຂ້ອງຂອງ10 ເມືອງ 3 ແຂວງ ຄື: ເມືອງແອດ, ເມືອງຮ້ຽມ, ເມືອງຫົວເມືອງ, ເມືອງຊຳເໜືອ, ເມືອງຊ່ອນ ແຂວງຫົວພັນ; ເມືອງປາກແຊງ, ເມືອງໂພນທອງ, ເມືອງໂພນ ໄຊ, ເມືອງວຽງຄຳ ແຂວງຫຼວງພະບາງ ແລະ ເມືອງ ພູກູດ, ແຂວງ ຊຽງຂວາງ ໃນລະດັບພື້ນທີ່ ແລະ ທ້ອງ ຖິ່ນ ເພື່ອຄົ້ນຄວ້າພິຈາລະນາ ບາງບັນຫາ ແລະ ໜ້າວຽກສຳຄັນ ແລະ ຈຳເປັນ ແຕ່ລະໄລຍະ;
11. ສ້າງຖານຂໍ້ມູນ-ຂ່າວສານ ດ້ານຊັບພະຍາກອນທຳມະຊາດ, ຊີວະນາໆພັນ, ສັດນ້ຳ-ສັດປ່າ, ປ່າໄມ້, ພັນ ພືດ, ເຄື່ອງປ່າຂອງດົງ ທີ່ຫາຍາກ ແລະ ໃກ້ຈະສູນພັນ ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ແລະ ແລກປ່ຽນຂໍ້ມູນຂ່າວສານ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ດ້ານຊີວະນາໆ ພັນ, ການເຂົ້າເຖິງແຫຼ່ງທ່ອງທ່ຽວ, ສູນວາງສະແດງ ແລະ ບໍລິການການທ່ອງທ່ຽວ ທາງທຳມະຊາດ, ປະ ຫວັດສາດ ແລະ ວັດທະນະທຳ ໃນແຕ່ລະໄລຍະ;
12. ຄຸ້ມຄອງ ແລະ ເຜີຍແຜ່ ຂໍ້ມູນ-ຂ່າວສານ ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ດ້ວຍຮູບ ການ ແລະ ວິທີການຕ່າງໆ ເຊັ່ນ: ເປັນເອກະສານ, ເປັນຮູບພາບໃນລະບົບດີຈີຕອນ ແລະ ປ້ອນເຂົ້າໃນ ຖານຂໍ້ມູນ, ຂຶ້ນເວບໄຊ ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
13. ກຳນົດແຜນການ ຈັດຊື້-ຈັດຈ້າງ ແລະ ສ້ອມແປງ ພາຫະນະ, ວັດຖຸ ແລະ ອຸປະກອນ ຂອງກອງຄຸ້ມຄອງອຸ ທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ແຕ່ລະໄລຍະ ໃຫ້ສອດຄ່ອງກັບລະບຽບການ;
14. ຄຸ້ມຄອງ, ຕິດຕາມ, ສັງລວມ ເກັບກຳຂໍ້ມູນ, ຂຶ້ນບັນຊີ, ກວດກາ ແລະ ສ້ອມແປງ ອາຄານ, ຫ້ອງການ, ພາຫະນະ ແລະ ວັດຖຸອຸປະກອນຕ່າງໆ ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ໃຫ້ສາມາດ ນຳໃຊ້ໄດ້ຍາວນານ;
15. ຄຸ້ມຄອງ, ກວດກາ ເອກະສານຂາເຂົ້າ-ຂາອອກ, ຈໍລະຈອນ ແລະ ສຳເນົາເອກະສານ, ຮັກສາຕາປະທັບ, ຄວາມເປັນລະບຽບຮຽບຮ້ອຍ ທີ່ຢູ່ພາຍໃນການຄຸ້ມຄອງ ຂອງຕົນ;
16. ຂຶ້ນແຜນ ແລະ ສະຫຼຸບບັນຊີ ລາຍຮັບ-ລາຍຈ່າຍ ງົບປະມານຕ່າງໆ ລວມທັງຜົນການເຄື່ອນໄຫວວຽກງານ ຕາມລະບຽບການ;
17. ກຳນົດແຜນດຳເນີນງານບັນດາກິດຈະກຳຕ່າງໆ ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ລວມທັງສະ ຫຼຸບລາຍງານ ການຈັດຕັ້ງປະຕິບັດວຽກງານ ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ປະຈຳ ອາທິດ, ປະຈຳ 1 ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ເຄິ່ງສະໄໝ ແລະ 5 ປີ ເພື່ອລາຍງານໃຫ້ ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ຕາມກຳນົດເວລາ;
18. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 8 ໜ້າທີ່ ຂອງໜ່ວຍງານວິຊາການ**

ໜ່ວຍງານວິຊາການ ປະກອບມີ 2 ກຸ່ມວຽກ ດັ່ງນີ້:

**ກ. ກຸ່ມວຽກຄຸ້ມຄອງ, ປົກປັກຮັກສາ ປ່າໄມ້ ແລະ ຊີວະນາໆພັນ ມີໜ້າທີ່ ດັ່ງນີ້:**

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ບັນດານິຕິກຳລຸ່ມກົດໝາຍ ແລະ ບົດແນະນຳດ້ານເຕັກນິກວິຊາການຕ່າງໆ ທີ່ຂັ້ນເທິງວາງອອກ;
2. ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ປຶກສາຫາລືແບບມີສ່ວນຮ່ວມກັບຊຸມຊົນ ດຳເນີນການສຳຫຼວດ, ເກັບກຳຂໍ້ມູນ ດ້ານຊີວະນາໆພັນ, ທ່າແຮງດ້ານການທ່ອງທ່ຽວປະເພດຕ່າງໆ ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ເພື່ອສະໜອງຂໍ້ມູນຕໍ່ການວາງແຜນພັດທະນາ, ກຳນົດເຂດຕ່າງໆ ໃນວຽກງານຄຸ້ມຄອງ, ອະນຸລັກ, ປົກປັກຮັກສາຊີວະນາໆພັນ ແລະ ນຳໃຊ້ ໃຫ້ມີຄວາມຍືນຍົງ;
3. ສຳຫຼວດ ແລະ ກຳນົດ ຈຸດຕິດປ້າຍ, ປັກຫຼັກໝາຍຂອບເຂດ ຕາມເງື່ອນໄຂ ແລະ ຄວາມເປັນເອກະພາບທີ່ໄດ້ຕົກລົງໃນແຜນການນຳໃຊ້ທີ່ດິນ ແລະ ປ່າໄມ້ ຮ່ວມກັບບ້ານ ທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
4. ເປັນເຈົ້າການ ໃນການສຳຫຼວດ-ຕິດຕາມ, ເກັບກຳຂໍ້ມູນ ພັນພືດ, ພັນສັດນ້ຳ ແລະ ສັດປ່າ ເພື່ອເປັນຂໍ້ມູນໃນການປະເມີນສະຖານະພາບ ຂອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
5. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນການຈັດສັນ ແລະ ປັບປຸງ ແຜນການນຳໃຊ້ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຂັ້ນບ້ານ ທີ່ຢູ່ໃນ ແລະ ອ້ອມຮອບ ເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ໂດຍ ສອດຄ່ອງກັບແຜນຈັດສັນ;
6. ເປັນເຈົ້າການ ສ້າງ ແລະ ປັບປຸງບັນດານິຕິກຳລຸ່ມກົດໝາຍ; ໂຄສະນາ, ເຜີຍແຜ່ ບັນດາກົດໝາຍ, ຄຳສັ່ງ, ມະຕິ, ຂໍ້ຕົກລົງ, ລະບຽບການ, ຍຸດທະສາດ ແລະ ແຜນດຳເນີນງານກ່ຽວກັບການ ຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
7. ສ້າງຄູ່ມື, ແຜ່ນພັບ, ໂປສເຕີ ແລະ ສາລະຄະດີ ເພື່ອຮັບໃຊ້ການໂຄສະນາ-ປູກຈິດສຳນຶກທີ່ພົວພັນກັບການອະນຸລັກຊັບພະຍາກອນປ່າໄມ້, ສັດນ້ຳ-ສັດປ່າ, ຊີວະນາໆພັນ ແລະ ປ້ອງກັນໄຟໄໝ້ລາມປ່າ ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
8. ເປັນເຈົ້າການປະສານສົມທົບ ກັບຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາໂຄງການລົງທຶນຕ່າງໆ ໂດຍອີງຕາມ ການປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ;
9. ເປັນເຈົ້າການປະສານສົມທົບກັບຂະແໜງການກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານ ກ້າເບ້ຍ, ປູກໄມ້, ຟື້ນຟູປ່າ ແລະ ກັນ ພະຍາດໄມ້, ບົ້ງ ແມງ ແລະ ສັດຕູພືດອື່ນ ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
10. ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງໃນການ ຕ້ານ ແລະ ສະກັດກັ້ນ ໄຟໄໝ້ລາມປ່າ ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
11. ສ້າງກຳລັງອາສາສະໝັກ ປ່າໄມ້ບ້ານ ແລະ ກຸ່ມເຍົາວະຊົນໃນບັນດາ ບ້ານ, ໂຮງຮຽນ ທີ່ຢູ່ໃນ ແລະ ອ້ອມຮອບ ເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ເພື່ອການອະນຸລັກ;
12. ເປັນເຈົ້າການກຳນົດຈຸດ ປ້ອມຍາມ ເຂົ້າ-ອອກ, ປ້ອມຍາມປ່າ ພ້ອມທັງສ້າງແຜນການເຄື່ອນໄຫວ ດຳເນີນການ ກວດກາ ລາດຕະເວນ ຕາມຈຸດຫຼໍ່ແຫຼມ ຢ່າງເປັນປົກກະຕິ-ຕໍ່ເນື່ອງ ກໍລະນີພົບເຫັນການລະເມີດກົດໝາຍ ແລະ ລະບຽບການເຊິ່ງໜ້າ ຕ້ອງໄດ້ ສັ່ງຢຸດຕິ, ກັກ, ຍຶດ, ເກັບກຳຂໍ້ມູນ ແລະ ຫຼັກຖານ ເພື່ອສັງລວມລາຍງານ ຕໍ່ເຈົ້າໜ້າທີ່ກ່ຽວຂ້ອງ ພ້ອມທັງເຂົ້າຮ່ວມ ແລະ ຕິດຕາມ ການດຳເນີນຂະບວນການຍຸຕິທຳ; ໑.໒໙

13. ເປັນເຈົ້າການປະສານສົມທົບ ກຳລັງອາສາສະໝັກປ່າໄມ້ບ້ານ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ອົງການປົກຄອງບ້ານ ທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ເພື່ອເຄື່ອນໄຫວລາດຕະເວນຕາມແຫຼ່ງຂ່າວ;
14. ເປັນເຈົ້າການ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ ກຳນົດ ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນຳໃຊ້ ແລະ ເຂດກັນຊົນ ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;

**ຂ. ກຸ່ມວຽກພັດທະນາ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ມີໜ້າທີ່ ດັ່ງນີ້:**

1. ເຜີຍແຜ່ຂະຫຍາຍ ແລະ ຈັດຕັ້ງປະຕິບັດ ບັນດານິຕິກຳລຸ່ມກົດໝາຍ ແລະ ບົດແນະນຳດ້ານເຕັກນິກວິຊາການຕ່າງໆ ທີ່ຂັ້ນເທິງວາງອອກ;
2. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຟື້ນຟູຊີວະນາໆພັນ ແລະ ລະບົບນິເວດທຳມະຊາດ ເປັນຕົ້ນ ການຟື້ນຟູປ່າແບບທຳມະຊາດ ແລະ ແບບປູກເສີມ, ການຟື້ນຟູ ປະຊາກອນສັດປ່າ ແລະ ປ່ອຍຄືນສູ່ທຳມະຊາດ ສັດປ່າທີ່ໄດ້ຮັບຜົນກະທົບຈາກໄພທຳມະຊາດ ແລະ ໂຄງການ ໃຫ້ຄືນສູ່ສະພາບເດີມ ຕາມລຳດັບມາດຕະການຫຼຸດຜ່ອນຜົນກະທົບ ຕໍ່ຊີວະນາໆພັນ;
3. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສົ່ງເສີມ ບຸກຄົນ, ຄອບຄົວ, ນິຕິບຸກຄົນ ຫຼື ການຈັດຕັ້ງ ປູກໄມ້ ແລະ ເຄື່ອງປ່າຂອງດົງເພື່ອປົກປັກຮັກສາສິ່ງແວດລ້ອມ ແລະ ຟື້ນຟູລະບົບນິເວດປ່າໄມ້ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
4. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກຳນົດຫຼັກການ ແລະ ລະບຽບການທີ່ເໝາະສົມ ກ່ຽວກັບການຄຸ້ມຄອງ, ການພັດທະນາຊີວິດການເປັນຢູ່ ຂອງບ້ານທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ໃຫ້ໄດ້ຮັບການພັດທະນາດີຂຶ້ນ;
5. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສົ່ງເສີມການຜະລິດ, ຄ້ຳປະກັນທາງດ້ານສະບຽງອາຫານ ແລະ ສ້າງລາຍຮັບເພີ່ມ ໂດຍການຂາຍຜະລິດຕະພັນກະສິກຳ, ສະບຽງອາຫານ, ຜະລິດຕະພັນຫັດຖະກຳທີ່ເປັນເອກະລັກຂອງທ້ອງຖິ່ນ, ສົ່ງເສີມການເກັບກູ້ເຄື່ອງປ່າຂອງດົງ ທີ່ເປັນສິນຄ້າແບບຍືນຍົງ ໃນເຂດກັນຊົນ, ເຂດຄຸ້ມຄອງນຳໃຊ້ ໃຫ້ແກ່ປະຊາຊົນ ແລະ ຫົວໜ່ວຍທຸລະກິດ ທີ່ໄດ້ຮັບອະນຸຍາດດຳເນີນກິດຈະການ ຢູ່ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
6. ຈັດກອງປະຊຸມປຶກສາຫາລືແຕ່ລະຂັ້ນ ຮ່ວມກັບພາກສ່ວນກ່ຽວຂ້ອງ ເພື່ອແລກປ່ຽນບົດຮຽນປະສົບການດ້ານຂໍ້ມູນ-ຂ່າວສານ ກ່ຽວກັບວຽກງານພັດທະນາຊີວິດການເປັນຢູ່ ຂອງປະຊາຊົນຢູ່ໃນ ແລະ ອ້ອມຮອບເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
7. ເປັນເຈົ້າການ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ສ້າງແຜນຈັດຕັ້ງການຝຶກອົບຮົມ ດ້ານວິຊາການຕິດພັນກັບການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເປັນຕົ້ນ ການປູກ, ການລ້ຽງ ແລະ ການຈັດຕັ້ງກຸ່ມຜູ້ຜະລິດ ໂດຍຕິດພັນກັບວຽກງານສົ່ງເສີມບົດບາດຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງ ເພື່ອຊຸກຍູ້, ສົ່ງເສີມ ແລະ ພັດທະນາ ຊີວິດການເປັນຢູ່ ຂອງປະຊາຊົນທີ່ອາໄສຢູ່ໃນ ແລະ ອ້ອມຮອບ ເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
8. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງກົນໄກກຳນົດ ກົດລະບຽບໃນການຄຸ້ມຄອງ ຫຼື ສັນຍາການອະນຸລັກການປົກປັກຮັກສາ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
9. ຊຸກຍູ້, ສົ່ງເສີມ ແລະ ຊີ້ນຳ ບັນດາໂຄງການ ແລະ ນັກສຶກສາຝຶກງານ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຂົ້າມາດຳເນີນການສຶກສາ, ຄົ້ນຄວ້າ ດ້ານຕ່າງໆ ຢູ່ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
10. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ສຶກສາທ່າແຮງ ແລະ ຄວາມຕ້ອງການຂອງແຕ່ລະຄອບຄົວ ຫຼື ບ້ານ ໃນການກຳນົດກິດຈະກຳສົ່ງເສີມເງື່ອນໄຂ ແລະ ມາດຖານ ສຳລັບການສ້າງຄອບຄົວ ຫຼື ບ້ານຕົວແບບ ທາງດ້ານການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແຫຼ່ງທ່ອງທ່ຽວທາງດ້ານ ທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ແບບມີສ່ວນຮ່ວມ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

໒.໑໔

11. ຄົ້ນຄວ້າສ້າງແຜນຍຸດທະສາດ ກ່ຽວກັບການທ່ອງທ່ຽວ ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ເປັນຕົ້ນ ການທ່ອງທ່ຽວທາງດ້ານ ທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ແບບມີສ່ວນຮ່ວມຂອງປະຊາຊົນ ເພື່ອນຳສະເໜີຂັ້ນເທິງພິຈາລະນາຮັບຮອງ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ;
12. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານ ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ (REDD+) ແລະ ການຈ່າຍຄ່າບໍລິການສິ່ງແວດລ້ອມ ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ;
13. ເປັນເຈົ້າການສ້າງ, ປັບປຸງ, ຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ຂໍ້ມູນຂ່າວສານ ກ່ຽວກັບປ່າສະຫງວນ ໂດຍເຊື່ອມຕໍ່ກັບລະບົບຂໍ້ມູນຂ່າວສານປ່າໄມ້ ຂອງພາກພື້ນ ແລະ ສາກົນ ;
14. ສ້າງແຜນ ແລະ ສະຫຼຸບສັງລວມ ລາຍງານຜົນການຈັດຕັ້ງປະຕິບັດກ່ຽວກັບວຽກງານວິຊາການ ປະຈຳອາທິດ, ປະຈຳ 1 ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ເຄິ່ງສະໄໝ ແລະ 5 ປີ ເພື່ອລາຍງານໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ຕາມກຳນົດເວລາ;
15. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 9 ຫຼັກການ

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດ ຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ ສົມທົບກັບການປະຕິບັດລະບອບຫົວໜ້າດຽວ ຕາມລະບົບແບ່ງຂັ້ນຄຸ້ມຄອງ ບົນພື້ນຖານ ມີການແບ່ງງານກັນຢ່າງລະອຽດ, ຈະແຈ້ງ ໃນໝູ່ຄະນະ ພ້ອມທັງມອບຄວາມຮັບຜິດຊອບ, ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ທຸກລະດັບ ແລະ ສິດ ໃນການຕັດສິນບັນຫາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ທຸກການເຄື່ອນໄຫວຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ແມ່ນອີງໃສ່ ກົດໝາຍ, ດຳລັດ, ຄຳສັ່ງ, ຄຳແນະນຳ, ລະບຽບການ ຂອງລັດ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ ໃຫ້ມີຄວາມເຂັ້ມງວດ ແລະ ເດັດຂາດ ໂດຍນຳເອົາແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍ ຂອງລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 10 ແບບແຜນວິທີເຮັດວຽກ

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການ ຢ່າງລະອຽດ, ແກ້ໄຂວຽກງານ ຢ່າງມີຈຸດສຸມ ແລະ ເປົ້າໝາຍ ໃນແຕ່ລະໄລຍະ, ປະສານສົມທົບກັບການຂະແໜງການທີ່ກ່ຽວຂ້ອງ ແລະ ຂະແໜງການອື່ນ ຢ່າງແໜ້ນແຟ້ນ ທັງສູນກາງ ແລະ ທ້ອງຖິ່ນ ແນໃສ່ໝູນໃຊ້ກຳລັງແຮງ ຂອງທຸກພາກສ່ວນ ເພື່ອພັດທະນາວຽກງານຄຸ້ມຄອງ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃນເຂດອຸທິຍານແຫ່ງຊາດ ນ້ຳແອດ-ພູເລີຍ ໃຫ້ມີຄວາມຍືນຍົງ;
2. ຫົວໜ້າກອງ ມີຄວາມຮັບຜິດຊອບໂດຍກົງຕໍ່ການນຳ ກະຊວງກະສິກຳ ແລະ ປ່າໄມ້, ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ ແຂວງ ຫົວພັນ, ຫຼວງພະບາງ ແລະ ແຂວງ ຊຽງຂວາງ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ, ຮອງຫົວໜ້າກອງ ມີໜ້າທີ່ຊ່ວຍວຽກ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ມອບໝາຍ ຂອງຫົວໜ້າກອງ; ພ.ອຟ

3. ຫົວໜ້າກອງ ເປັນຜູ້ກວດກາເອກະສານ ຂາເຂົ້າ-ຂາອອກ ທັງໝົດ, ເປັນຜູ້ລົງລາຍເຊັນຕໍ່ເອກະສານສໍາຄັນ, ກໍລະນີ ຕິດຂັດ ຫຼື ໄປເຄື່ອນໄຫວວຽກງານທາງລັດຖະການ ຕ້ອງມອບສິດປະຈໍາການຊົ່ວຄາວ ໃຫ້ແກ່ຮອງຫົວໜ້າກອງ ທ່ານໃດທ່ານໜຶ່ງ ຮັກສາການແທນ, ໃນເມື່ອຫົວໜ້າກອງ ກັບຄືນມາປະຈໍາການແລ້ວ ຜູ້ຮັກສາການແທນ ຕ້ອງລາຍງານວຽກທີ່ຕົນເອງໄດ້ແກ້ໄຂ ແລະ ວຽກທີ່ຍັງຄົງຄ້າງ ໃຫ້ຫົວໜ້າກອງ ຮັບຊາບ;
4. ພົວພັນ ແລະ ສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານ ໃຫ້ສໍາເລັດຜົນຕາມເປົ້າໝາຍທີ່ກໍານົດໄວ້;
5. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບ, ຖອດຖອນບົດຮຽນ, ຕີລາຄາ ຜົນໄດ້ຮັບ ແລະ ຜົນເສຍ ພ້ອມທັງປະຕິບັດລະບອບການລາຍງານ, ສ່ອງແສງ ຢ່າງເປັນປົກກະຕິ ແລະ ເຂັ້ມງວດ;
6. ປະຕິບັດລະບອບປະຊຸມ, ສ່ອງແສງ, ລາຍງານ ປະຈໍາ 1 ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ ຫຼື ກອງປະຊຸມວິຊາການ ລວມທັງການປະຕິບັດລະບອບລາຍງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ ຢ່າງເຂັ້ມງວດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 11 ງົບປະມານ, ຕາປະທັບ ແລະ ເຄື່ອງແບບ**

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ ມີງົບປະມານ, ຕາປະທັບ ແລະ ເຄື່ອງແບບ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ທາງລັດຖະການ.

**ມາດຕາ 12 ການຈັດຕັ້ງປະຕິບັດ**

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນໍ້າແອດ-ພູເລີຍ, ກົມປ່າໄມ້, ພະແນກກະສິກໍາ ແລະ ປ່າໄມ້ ແຂວງຫົວພັນ, ແຂວງຫຼວງພະບາງ ແລະ ແຂວງຊຽງຂວາງ, ຫ້ອງການ, ບັນດາກົມ, ສະຖາບັນ ແລະ ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກໍາ ແລະ ປ່າໄມ້, ພະແນກກະສິກໍາ ແລະ ປ່າໄມ້ ແຂວງ/ນະຄອນຫຼວງວຽງຈັນ, ຫ້ອງການກະສິກໍາ ແລະ ປ່າໄມ້ ເມືອງ/ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 13 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ໑.໑໙

**ລັດຖະມົນຕີ**

ກະຊວງກະສິກໍາ ແລະ ປ່າໄມ້

ລັດຖະມົນຕີ

ປອ. ເພັດ ພົມພິພັກ